ວຽງຈັນໃໝ່ VIENTIANE MAI NEWSPAPER



# ກະຊວງປ້ອງກັນຄວາມສະຫງົບ ໄດ້ຮັບເຄື່ອງຊ່ວຍເຫຼືອ




☆ ທ່ານນາງ ສີຣິ ບຸດດາຄຳ ຜູ້ອຳນວຍການບໍລິສັດ ລາວລໍ ແອນຄອນເຊົາແຕນຊີກຣຸບ ພ້ອມດ້ວຍຄະນະ ໄດ້ນຳເຄື່ອງອຸປະກອນຮັບໃຊ້ຫ້ອງການລວມມີ ຄອມພິວເຕີ ຈຳນວນ 9 ຊຸດ ເຄື່ອງພິມ ຈຳນວນ 3 ໜ່ວຍ ຈັກອັດເອກະສານ ຈຳນວນ 1 ໜ່ວຍ ແລະ ຄອມພິວເຕີໂນດບຸກ 1 ໜ່ວຍ ລວມມູນຄ່າ 50 ລ້ານກີບ ມາມອບໃຫ້ແກ່ກະຊວງປ້ອງກັນຄວາມສະຫງົບ ກົມໃຫຍ່ຕຳຫຼວດ ກົມຕຳຫຼວດສາກົນ ແລະ ກົມຕຳຫຼວດເສດຖະກິດ ເພື່ອປະກອບສ່ວນເຂົ້າໃນການດຳເນີນວຽກງານໃຫ້ມີປະສິດທິພາບ ຢູ່ພາຍໃຕ້ການຊີ້ນຳຂອງກະຊວງປ້ອງກັນຄວາມສະຫງົບ ໂດຍສະເພາະແມ່ນໜ່ວຍງານທີ່ເຮັດວຽກກ່ຽວກັບອາດຊະຍາກຳທາງດ້ານເສດຖະກິດ ເພື່ອໃຫ້ຮັບປະກັນໄດ້ໃນການເກັບກຳ ກວດສອບ ແລະ ບໍລິຫານໃຫ້ມີປະສິດທິພາບ ເພື່ອຕອບສະໜອງໃນການບໍລິການ ແລະ ການຮັກສາຄວາມປອດໄພດ້ານຊີວິດ ແລະ ຊັບສິນໃຫ້ແກ່ປະຊາຊົນ

ບໍລິສັດ ລາວລໍແອນຄອນເຊົາແຕນຊີກຣຸບ ເປັນບໍລິສັດທີ່ປຶກສາທາງດ້ານກົດໝາຍທີ່ຊ່ວຍໃຫ້ການປຶກສາຕໍ່ບໍລິສັດຕ່າງປະເທດທີ່ມາລົງທຶນໃນ ສປປ ລາວ.

ຕາງໜ້າຮັບໃນຄັ້ງນີ້ ໂດຍທ່ານ ພົນຈັດຕະວາ ສີສະຫວາດ ແກ້ວມາລາວົງ ຫົວໜ້າກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ໂດຍມີພະນັກງານທັງສອງຝ່າຍເຂົ້າຮ່ວມ ພິທີມອບ-ຮັບໃນຄັ້ງນີ້ ໄດ້ຈັດຂຶ້ນໃນທ້າຍອາທິດທີ່ຜ່ານມາຢູ່ທີ່ກະຊວງປ້ອງກັນຄວາມສະຫງົບ.

# ເປີດຊຸດບຳລຸງຊັ້ນ ມ.ຕົ້ນ

☆ ອີງໃສ່ແຜນພັດທະນາການສຶກສາ ຜ່ານຈົບຊັ້ນມັດທະຍົມຕອນຕົ້ນ (ມ.4) ແຕ່ນີ້ຫາປີ 2015 ຂອງພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ແລະ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງຈັນທະບູລີ ວາງອອກ ເພື່ອເປັນການຮັບປະກັນການຮຽນ-ການສອນ ມ.ຕົ້ນ ບຳລຸງໃຫ້ໄດ້ຮັບຜົນສຳເລັດດີ ທ່ານເຈົ້າເມືອງຈັນທະບູລີ ຈຶ່ງໄດ້ຕົກລົງແຕ່ງຕັ້ງຄະນະກຳມະການຮັບຜິດຊອບການຮຽນ-ການສອນຊັ້ນ ມ.ຕົ້ນ ບຳລຸງ ໃຫ້ແກ່ປະຊາຊົນ ກຸ່ມ II ທົ່ງຕູມ ໃຫ້ໄດ້ສຳເລັດຜົນຕາມແຜນ ໃນປີ 2014 ເມືອງຈັນທະບູລີ ປະກອບມີ 5 ກຸ່ມບ້ານ ແບ່ງອອກເປັນ 30 ບ້ານ ມີພົນລະເມືອງທັງໝົດ 63.200 ຄົນ ຍິງ 32.008 ຄົນ ມີ 12.335 ຄອບຄົວ ປະຊາກອນເກນອາຍຸ 15-40 ປີ ລວມ 28.622 ຄົນ ຍິງ 9.228 ຄົນ ໃນນັ້ນມີກຸ່ມເປົ້າໝາຍ ອາຍຸ 15-35 ປີ ທີ່ບໍ່ຈົບມັດທະຍົມຕອນຕົ້ນທັງໝົດ 224 ຄົນ ຍິງ 117 ຄົນ ສຳລັບການຮຽນ-ການສອນບຳລຸງໃຫ້ຜູ້ຮຽນບໍ່ຈົບມັດທະຍົມຕົ້ນຄັ້ງນີ້ແມ່ນຈັດເປັນຊຸດທຳອິດ ເລີ່ມຈາກກຸ່ມ II ທົ່ງຕູມ ປະກອບດ້ວຍ 5 ບ້ານ ລວມມີ 16 ຄົນ ຍິງ 1 ຄົນ ຮຽນທີ່ໂຮງຮຽນປະຖົມສົມບູນສຶກສາທົ່ງຕູມ ລວມມີ 8 ວິຊາ ໃຊ້ເວລາຮຽນທັງໝົດ 520 ຊົ່ວໂມງ ກຳນົດຮຽນ 1 ວັນຕໍ່ອາທິດ.

ພິທີເປີດການຮຽນ-ການສອນດັ່ງກ່າວໄດ້ຈັດຂຶ້ນໃນວັນທີ 22 ມິຖຸນາ 2012 ທີ່ໂຮງຮຽນປະຖົມສົມບູນສຶກສາທົ່ງຕູມ ນະຄອນຫຼວງວຽງຈັນ ໂດຍເປັນກຽດເຂົ້າຮ່ວມຂອງທ່ານ ຈັນທອນ ລັດຖະຈັກ ຮອງເຈົ້າເມືອງຈັນທະບູລີ ມີບັນດາເລຂາພັກກຸ່ມ ຫົວໜ້າຂະແໜງສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

# ພົບກັບເຄື່ອງມືສື່ສານ Nokia Asha ລຸ້ນໃໝ່

☆ ໃນເດືອນກໍລະກົດ 2012 ທີ່ຈະມາເຖິງນີ້ ບັນດາຜູ້ທີ່ມັກຮັກໃນ ການສື່ສານທີ່ທັນສະໄໝ ໃຫ້ຄວາມສະດວກສະບາຍ ແລະ ຄວາມບັນເທີງຢູ່ໃນກຳມື ໃນໂອກາດອັນໃກ້ນີ້ ຈະໄດ້ພົບກັບມືຖື ໂນເກຍ ອາຊາ 305 Nokia Asha 306 ແລະ Nokia Asha 311.

ຜູ້ຊົມໃຊ້ຍັງຈະໄດ້ຮັບຂອງ ຂວັນພິເສດ ຄື: ເກມຂອງເອເລັກ ໂທຣນິກອາຣທ (EA) ຈຳນວນ 40 ເກມ ໃຫ້ດາວໂຫຼດ ໂດຍບໍ່ ໄດ້ເສຍຄ່າ ເປັນລະບົບໜ້າຈໍສຳຜັດທີ່ມີປະສິດທິພາບສູງ.

ສຳລັບລາຄາ Nokia Asha 305 ຈະມີລາຄາ ປະມານ 712.000 ກີບ ປະມານ 89 ໂດລາສະຫະລັດ ຄາດວ່າຈະມີວາງ ຈຳໜ່າຍໃນກາງເດືອນກໍລະກົດ 2012 ທີ່ຈະມາເຖິງນີ້ ສ່ວນ Nokia Asha 311 ລາຄາປະມານ 1 ລ້ານກີບ ປະມານ 125 ໂດລາສະຫະລັດ ເຊິ່ງຄາດວ່າ ຈະມີວາງຈຳໜ່າຍໃນ ສປປ ລາວ ໃນເດືອນກໍລະກົດ 2012 ທີ່ ຈະມາເຖິງນີ້.

ບໍລິສັດ ດາວຄຳ ຄອນກຣີດ